ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 93 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 14.07.2023

# ຂໍ້ຕົກລົງ

## ວ່າດ້ວຍການຈັດຕັ້ງປະຕິບັດ ນະໂຍບາຍສິນເຊື່ອ ເພື່ອກະຕຸ້ນເສດຖະກິດ ແລະ ນະໂຍບາຍສິນເຊື່ອເພື່ອກະຈາຍແຫຼ່ງທຶນສູ່ທ້ອງຖິ່ນ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ມະຕິຕົກລົງກອງປະຊຸມລັດຖະບານ ສະໄໝສາມັນ ປະຈຳເດືອນມີນາ 2023 ສະບັບເລກທີ 05/ລບ, ລົງວັນທີ 31 ມີນາ 2023.

ໂດຍຜັນຂະຫຍາຍມະຕິກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 56/ສພຊ, ລົງວັນທີ 08 ກໍລະກົດ 2022 ແລະ ເພື່ອສົ່ງເສີມຂະແໜງການຜະລິດ, ການຄ້າ ແລະ ການບໍລິການທີ່ເປັນປາຍແຫຼມ ທົດແທນການນຳເຂົ້າ-ສົ່ງເສີມການສົ່ງອອກສິນຄ້າ ແລະ ການບໍລິການ, ສ້າງວຽກເຮັດງານທຳ ແລະ ປະກອບສ່ວນເຂົ້າໃນການຮັກສາສະຖຽນລະພາບມະຫາພາກດ້ານການເງິນ-ເງິນຕາ ແລະ ພັດທະນາເສດຖະກິດ ແບບຍືນຍົງ ໂດຍສະເພາະຢູ່ທ້ອງຖິ່ນໃນຂອບເຂດທົ່ວປະເທດ.

## ນາຍົກລັດຖະມົນຕີ ຕົກລົງ:

**ມາດຕາ 1** ເຫັນດີໃຫ້ທະນາຄານແຫ່ງ ສປປ ລາວ ຈັດຕັ້ງປະຕິບັດນະໂຍບາຍສິນເຊື່ອເພື່ອກະຕຸ້ນເສດຖະກິດ ແລະ ນະໂຍບາຍສິນເຊື່ອເພື່ອກະຈາຍແຫຼ່ງທຶນສູ່ທ້ອງຖິ່ນ.

**ມາດຕາ 2** ແຫຼ່ງທຶນຂອງນະໂຍບາຍ

1. ນະໂຍບາຍສິນເຊື່ອເພື່ອກະຕຸ້ນເສດຖະກິດ ນຳໃຊ້ແຫຼ່ງທຶນງົບປະມານສົມທົບຈາກລັດຖະບານ ຈຳນວນ 2.500 (ສອງພັນຫ້າຮ້ອຍ) ຕື້ກີບ ໃນໄລຍະເວລາ 3 ປີ (2023-2025);

2. ນະໂຍບາຍສິນເຊື່ອເພື່ອກະຈາຍແຫຼ່ງທຶນສູ່ທ້ອງຖິ່ນ ນຳໃຊ້ແຫຼ່ງທຶນ ຂອງທະນາຄານແຫ່ງ ສປປ ລາວ ຈຳນວນ 4.500 (ສີ່ພັນຫ້າຮ້ອຍ) ຕື້ກີບ ໃນໄລຍະເວລາ 3 ປີ (2023-2025).

**ມາດຕາ 3 ຂະແໜງການເປົ້າໝາຍ**

1. ຂະແໜງກະສິກຳ ແລະ ປ່າໄມ້:

- ການປູກຝັງ: ກາເຟ, ຊາ, ຢາງພາລາ, ໝາກໄມ້, ໄມ້ປູກ (ສະເພາະໃຫ້ເປັນທຶນໝູນວຽນ);
- ການປູກພືດອາຍຸສັ້ນ: ເຂົ້າ, ສາລີ, ຖົ່ວເຫຼືອງຝັກສົດ, ຖົ່ວເບີ, ຢາສູບ, ຖົ່ວດິນ, ອ້ອຍ, ພືດຜັກ, ໝາກໂມ, ໝາກອຶ;
- ການລ້ຽງສັດ: ງົວ, ຄວາຍ, ໝູ, ແບ້, ແກະ, ສັດປີກ, ສັດນ້ຳ;
- ການປຸງແຕ່ງ: ໂຮງສີເຂົ້າ, ໂຮງງານຂ້າສັດ, ໂຮງງານຜະລິດທີ່ອາຫານສັດ, ໂຮງງານຜະລິດຝຸ່ນຊີວະພາບ ແລະ ອິງຄະທາດ, ໂຮງງານປຸງແຕ່ງຢາງພາລາ, ໂຮງງານຜະລິດວັກຊີນສັດ, ຢາປາບສັດຕູພືດ, ຢາປົວພະຍາດສັດ ແລະ ເຄື່ອງມືສັດຕະວະແພດ, ໂຮງງານປຸງແຕ່ງມັນຕົ້ນ (ສະເພາະທຶນໝູນວຽນເທົ່ານັ້ນ).

2. ຂະແໜງອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ:

- ການປຸງແຕ່ງອາຫານ ແລະ ເຄື່ອງດື່ມ: ຜະລິດຕະພັນແປຮູບຊີ້ນ (ໝູ, ໄກ່ ແລະ ປາ), ນ້ຳມັນພືດ (ປາມ, ຖົ່ວເຫຼືອງ ແລະ ງາ), ເຄື່ອງປຸງ (ນ້ຳຊອດໝາກເລັ່ນ-ໝາກເຜັດ, ນ້ຳປາ, ນ້ຳສະອິວ), ໝາກໄມ້ກະປ໋ອງ (ໝາກໄມ້ດອງ ແລະ ນ້ຳໝາກໄມ້), ນົມ ແລະ ຜະລິດຕະພັນຈາກນົມ, ປາແດກສຳເລັດຮູບ, ເສັ້ນໝີ່, ເສັ້ນເຝີ, ເຂົ້າປຽກ, ເຂົ້າປຸ້ນ;
- ເຄມີອຸດສາຫະກຳ: ສະບູ່ (ແຫຼວ, ກ້ອນ), ນ້ຳຢາຊັກຜ້າ, ຢາສະພົມ, ນ້ຳຢາດັບກິ່ນ, ນ້ຳຢາລ້າງຈານ, ຢາປົວພະຍາດ, ອຸປະກອນການແພດ, ເຈ້ຍຂາວ, ເຈ້ຍທິສຊູ, ອຸດສາຫະກຳຈາກຢາງພາລາ;
- ເຄື່ອງຫຸ້ມຫໍ່: ຂວດແກ້ວ, ຂວດປຣາສະຕິກ, ຜະລິດກ່ອງບັນຈຸຕ່າງໆ, ແກັດເຈ້ຍ, ຖົງບັນຈຸ (ເຂົ້າ, ສາລີ, ຊີມັງ, ປຸ໋ຍ ແລະ ອາຫານສັດ);
- ວັດສະດຸກໍ່ສ້າງ: ກະເບື້ອງມຸງຫຼັງຄາ, ຊີແພັກ, ນັອດ, ດອກຕະປູ, ຕາໜ່າງເຫຼັກ, ຕາໜ່າງຢາງ, ໜາມໝາກຈັບ;
- ຫັດຖະກຳ: ແຜ່ນແພພື້ນເມືອງ, ໄມ້, ຫວາຍ, ໄມ້ປ່ອງ ແລະ ເຄືອໄມ້, ເຄື່ອງປັ້ນດິນເຜົາ, ເຄື່ອງປະດັບ, ເຄື່ອງດື່ມພື້ນເມືອງ.

3. ຂະແໜງບໍລິການ-ທ່ອງທ່ຽວ ແລະ ຂະແໜງການຄ້າ:

- ບໍລິການ ແລະ ທ່ອງທ່ຽວ: ທີ່ພັກແຮມ (ໂຮງແຮມຂະໜາດກາງ, ຂະໜາດນ້ອຍ ແລະ ເຮືອນພັກ), ສະຖານທີ່ທ່ອງທ່ຽວ (ປັບປຸງທາງຍ່າງ, ປ້າຍຊີ້ບອກ, ສະຖານທີ່ຈອດລົດ, ຫ້ອງຂໍ້ມູນຂ່າວສານ, ກິດຈະກຳທ່ອງທ່ຽວ ແລະ ປະດັບປະດາຕົບແຕ່ງສະຖານທີ່ໃຫ້ຈົບງາມ), ທຸລະກິດນຳທ່ຽວ (ການປະກອບພາຫະນະຂົນສົ່ງນັກທ່ອງທ່ຽວ, ອຸປະກອນຮັບໃຊ້ທີ່ຈຳເປັນສຳລັບຄວາມປອດໄພ, ປັບປຸງຜະລິດຕະພັນການທ່ອງທ່ຽວ), ຮ້ານອາຫານ (ຮ້ານອາຫານທ້ອງຖິ່ນທີ່ເປັນເອກະລັກ ສາມາດຮອງຮັບນັກທ່ອງທ່ຽວກຸ່ມໃຫຍ່ໄດ້).

- ການຄ້າ: ການເກັບຊື້ສິນຄ້າກະສິກຳ ແລະ ຮ້ານຈຳໜ່າຍຜະລິດຕະພັນທີ່ຜະລິດຢູ່ພາຍໃນ.

## ມາດຕາ 4 ຂັ້ນຕອນການຈັດຕັ້ງປະຕິບັດ

1. ການສະເໜີ: ໃຫ້ຫົວໜ່ວຍທຸລະກິດ ປະກອບເອກະສານຜ່ານທະນາຄານທຸລະກິດ ຕາມລະບຽບການ, ທະນາຄານທຸລະກິດ ຄົ້ນຄວ້າພິຈາລະນາອະນຸມັດສິນເຊື່ອ, ຫຼັງຈາກນັ້ນ ທະນາຄານທຸລະກິດ ຈຶ່ງນຳສະເໜີຜົນການຄົ້ນຄວ້າຄັດເລືອກຫົວໜ່ວຍທຸລະກິດ ຕໍ່ຄະນະຈັດຕັ້ງປະຕິບັດ;

2. ການຄົ້ນຄວ້າພິຈາລະນາ: ຄະນະຈັດຕັ້ງປະຕິບັດ ຄົ້ນຄວ້າພິຈາລະນາຮັບຮອງເອົາຫົວໜ່ວຍທຸລະກິດ, ພາຍຫຼັງການຮັບຮອງແລ້ວ ທະນາຄານແຫ່ງ ສປປ ລາວ ດຳເນີນການເຊັນສັນຍາກັບທະນາຄານທຸລະກິດ;

3. ການນຳໃຊ້ແຫຼ່ງທຶນ:

   - ສຳລັບນະໂຍບາຍສິນເຊື່ອເພື່ອກະຕຸ້ນເສດຖະກິດ: ພາຍຫຼັງເຊັນສັນຍາ ແລະ ຮອດງວດຊຳລະດອກເບ້ຍ (ທຸກ 3 ຫຼື 6 ເດືອນ) ທະນາຄານທຸລະກິດ ສັງລວມລາຍງານໃຫ້ທະນາຄານແຫ່ງ ສປປ ລາວ ເພື່ອກວດສອບຄວາມຖືກຕ້ອງຂອງການປະຕິບັດພັນທະຂອງຫົວໜ່ວຍທຸລະກິດ ແລະ ປະເມີນຜົນລາຍງານ, ພາຍຫຼັງຖືກຕ້ອງແລ້ວ ທະນາຄານແຫ່ງ ສປປ ລາວ ຈະຊຳລະພັນທະໃຫ້ທະນາຄານທຸລະກິດ;
   - ສຳລັບນະໂຍບາຍສິນເຊື່ອເພື່ອກະຈາຍແຫຼ່ງທຶນສູ່ທ້ອງຖິ່ນ: ໃຫ້ອົງການປົກຄອງທ້ອງຖິ່ນ ເປັນເຈົ້າການໃນການຄົ້ນຄວ້າ ແລະ ຄັດເລືອກໂຄງການທີ່ຕິດພັນ ໂດຍສົມທົບກັບທະນາຄານທຸລະກິດທີ່ຕັ້ງຢູ່ທ້ອງຖິ່ນ ທີ່ໄດ້ຮັບມອບໝາຍ, ພາຍຫຼັງເຊັນສັນຍາແລ້ວ ທະນາຄານທຸລະກິດນຳສະເໜີຕໍ່ທະນາຄານແຫ່ງ ສປປ ລາວ ເພື່ອຄົ້ນຄວ້າການເບີກຖອນການນຳໃຊ້ເງິນກູ້;

4. ການຕິດຕາມກວດກາ: ທະນາຄານແຫ່ງ ສປປ ລາວ ເປັນເຈົ້າການສົມທົບພາກສ່ວນທີ່ກ່ຽວຂ້ອງ ດຳເນີນການຕິດຕາມກວດກາທາງເອກະສານ ແລະ ສຸ່ມລົງກວດກາຢູ່ພື້ນທີ່ຕົວຈິງກ່ຽວກັບການຈັດຕັ້ງປະຕິບັດ ນະໂຍບາຍດັ່ງກ່າວ. ກໍລະນີພົບເຫັນ ຫຼື ໄດ້ຮັບການແຈ້ງຈາກ ທະນາຄານທຸລະກິດ ຫຼື ຫົວໜ່ວຍທຸລະກິດທີ່ບໍ່ສາມາດປະຕິບັດພັນທະໄດ້, ຫົວໜ່ວຍທຸລະກິດດັ່ງກ່າວ ຈະຖືກໂຈະການຮັບນະໂຍບາຍ ແລະ ຄະນະຈັດຕັ້ງປະຕິບັດ ຈະພິຈາລະນາສະຖານະຂອງຫົວໜ່ວຍທຸລະກິດດັ່ງກ່າວ (ສືບຕໍ່ ຫຼື ຍົກເລີກຖາວອນ).

## ມາດຕາ 5 ມາດຕະການຈັດຕັ້ງປະຕິບັດ

1. ມອບໃຫ້ທະນາຄານແຫ່ງ ສປປ ລາວ ຄົ້ນຄວ້າສ້າງນິຕິກຳ ທີ່ຕິດພັນກັບການຈັດຕັ້ງປະຕິບັດນະໂຍບາຍສິນເຊື່ອເພື່ອກະຕຸ້ນເສດຖະກິດ ແລະ ນະໂຍບາຍສິນເຊື່ອ ເພື່ອກະຈາຍແຫຼ່ງທຶນສູ່ທ້ອງຖິ່ນ ໃຫ້ລະອຽດ ເປັນຕົ້ນ ຫຼັກການ, ເງື່ອນໄຂ, ຂັ້ນຕອນຂອງການສະເໜີ, ການພິຈາລະນາ, ການອະນຸມັດໂຄງການ, ກົນໄກການຈັດຕັ້ງປະຕິບັດ ແລະ ການປະເມີນຜົນ ພ້ອມທັງເຜີຍແຜ່ໃຫ້ອົງການປົກຄອງທ້ອງຖິ່ນ, ເປົ້າໝາຍທະນາຄານທຸລະກິດ ແລະ ຫົວໜ່ວຍທຸລະກິດ ຮັບຊາບ; ແບ່ງຂັ້ນການຄຸ້ມຄອງ ແລະ ຕິດຕາມ ຂັ້ນສູນກາງ ແລະ ທ້ອງຖິ່ນ, ແຕ່ງຕັ້ງຄະນະຊີ້ນຳລວມ ແລະ ຄະນະຈັດຕັ້ງປະຕິບັດ; ເປັນເຈົ້າການ ຄຸ້ມຄອງ ແລະ ຕິດຕາມການຈັດຕັ້ງປະຕິບັດນະໂຍບາຍສິນເຊື່ອດັ່ງກ່າວ ແລະ ລາຍງານໃຫ້ລັດຖະບານ ຢ່າງເປັນປົກກະຕິ;

2. ມອບໃຫ້ກະຊວງການເງິນ ຂຶ້ນແຜນ ແລະ ຈັດສັນແຫຼ່ງງົບປະມານຂອງລັດ ໂດຍຄົ້ນຄວ້າອອກພັນທະບັດລັດຖະບານ ຈຳນວນ 2.500 (ສອງພັນຫ້າຮ້ອຍ) ຕື້ກີບ ໃນໄລຍະເວລາ 3 ປີ (2023-2025) ໃຫ້ແກ່ທະນາຄານແຫ່ງ ສປປ ລາວ;

3. ມອບໃຫ້ ກະຊວງກະສິກຳ ແລະ ປ່າໄມ້, ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຄັດເລືອກ ແລະ ຢັ້ງຢືນບັນດາໂຄງການເປົ້າໝາຍການຜະລິດສິນຄ້າ ແລະ ການບໍລິການ ທີ່ເປັນບູລິມະສິດ (ປາຍແຫຼມ) ເພື່ອສິ່ງເສີມເຂົ້າໃນເປົ້າໝາຍປະຕິບັດນະໂຍບາຍສິນເຊື່ອເພື່ອກະຕຸ້ນເສດຖະກິດ ແລະ ນະໂຍບາຍສິນເຊື່ອເພື່ອກະຈາຍແຫຼ່ງທຶນສູ່ທ້ອງຖິ່ນ.

ມາດຕາ 6 ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

ມາດຕາ 7 ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີແຫ່ງ ສປປ ລາວ

ສອນໄຊ ສີພັນດອນ